## ສູນໃຫ້ຄວາມຍຸດຕິທຳຕໍ່ຊຸມຊົນ Community Justice Centres ຕ່າງໆແມ່ນເຮັດຫັຍງ?

ສູນໃຫ້ຄວາມຍຸດຕິທຳຕໍ່ຊຸມຊົນ Community Justice Centres (CJCs) ຕ່າງໆໃຫ້ການບໍລິການຄວາມປະນີປະນອມກັນຕໍ່ຊຸມຊົນ ເພື່ອຊ່ວຍໃຫ້ຄົນແກ້ໄຂການຜິດຖຽງກັນຂອງພວກເຂົາເອງ. ການບໍລິການຂອງພວກເຮົາແມ່ນບໍ່ໄດ້ເສັຽເງິນ, ເປັນຄວາມລັບ, ດ້ວຍຄວາມສະມັກໃຈ, ເວລາເໝາະສົມ ແລະງ່າຍໃນການໃຊ້.

## ການໄກເກັ່ຽທຳຄວາມປະນີປະນອມແມ່ນຫັຍງ?

ການໄກເກັ່ຽທຳຄວາມປະນີປະນອມແມ່ນຄົນທັງຫຼາຍມາຫາກັນ ເພື່ອເວລົມກັນເຣື່ອງຕ່າງໆທີ່ຜິດຖຽງກັນ.

ການປະຊຸມໄກເກັ່ຽທຳຄວາມປະນີປະນອມກັນຢູ່ສູນ CJCs ນັ້ນແມ່ນໄດ້ທຳຂຶ້ນໂດຍຜູ້ໄກເກັ່ຽສອງຄົນ ທີ່ບໍ່ເຂາຝ່າຍໃດ, ຜ່ານການຝຶກຫັດມາ ຊ່ວຍເຫຼືອຄົນທັງຫຼາຍ:

- ໃຫ້ຊອກບັນຫາຂອງເຣື່ອງຕ່າງໆນັ້ນ
- ໃໃຫ້ຄຶດຫາທາງແກ້ໄຂເຣື່ອງຕ່າງໆນັ້ນ
- ໃໃຫ້ຄຶດຫາທາງເລືອກອື່ນໆ
- ໃຮ່ວມກັນແກ້ໄຂຈົນຕົກລົງກັນເອົາແນວໃດແນວນຶ່ງໃຫ້ໄດ້

ຜູ້ໄກເກັ່ຽນັ້ນກຳກັບວ່າການປະຊຸມເຣື່ອງການໄກເກັ່ຽທຳຄວາມປະນີປະນອມນັ້ນຄວນຈະທຳກັນແບບໃດ. ຜູ້ຄົນທີ່ຜິດຖຽງກັນຕົກລົງກັນວ່າແມ່ນຫັຍງຄວນເວລົມກັນແລະແມ່ນຫັຍງແດ່ທີ່ໄດ້ຕົກລົງກັນຮັບເອົາ.

## ແມ່ນການຜິດຖຽງກັນແນວໃດແດ່ທີ່ເໝາະສົມກັບການໄກເກັ່ຽທຳຄວາມປະນີປະນອມກັນ?

ມີການຜິດຖຽງຫຼາຍສິ່ງຫຼາຍຢ່າງທີ່ເໝາະສົມກັບການໄກເກັ່ຽທຳຄວາມປະນີປະນອມກັນ, ຮ່ວມເອົາທັງ:

- ໃເພື່ອນບ້ານໃກ້ຄຽງກັນ
- ໃຄອບຄົວ
- ໃເດັກໜຸ່ມສາວ
- ໃບ່ອນເຮັດວຽກ
- ໃອົງການອາສາສະມັກ ຫຼືວ່າອົງການຊຸມຊົນຕ່າງໆ
- ໃທຸຣະກິດ
- ໃການຮຽກຮ້ອງສ່ວນຕົວ ແລະເຣື່ອງເງິນຈຳນວນໜ້ອຍ
- ໃເຣື່ອງອື່ນທີ່ມີຄວາມສຳພັນກັນຕໍ່ໄປຢູ່

## ເປັນຫັຍງຈຶ່ງໄກເກັ່ຽທຳຄວາມປະນີປະນອມກັນ?

ບ່ອນໄກເກັ່ຽທຳຄວາມປະນີປະນອມກັນ ຊ່ວຍຄົນຊອກຂໍ້ແກ້ບັນຫາຂອງພວກເຂົາເອງ ກັບເຣື່ອງຄວາມກັງວົນຂອງພວກເຂົາ.

ບ່ອນໄກເກັ່ຽທຳຄວາມປະນີປະນອມກັນໃຫ້ສະຖານທີ່ມີສິ່ງແວດລ້ອມອັນປອດໄພແລະບໍ່ແມ່ນແບບທາງການ ເພື່ອໃຫ້ຄົນໄດ້ເວລົມຕໍ່ກັນແລະກັນ ເພື່ອແກ້ໄຂບັນຫາຕ່າງໆໂດຍມີການຊ່ວຍເຫຼືອຂອງຜູ້ໄກເກັ່ຽຕ່າງໆ.

ເກີນກ່ວາ 85% ຂອງການໄກເກັ່ຽທຳຄວາມປະນີປະນອມກັນ ໄດ້ຮັບຜົນມີການຕົກລົງກັນແນວໃດແນວນຶ່ງໄດ້.

## ຂ້າພະເຈົ້າຈະສາມາດຈັດທຳການໄກເກັ່ຽທຳຄວາມປະນີປະນອມກັນໄດ້ແບບໃດ?

ສິ່ງທີ່ທ່ານຄວນເຮັດກໍມີພຽງແຕ່ວ່າຕິດຕໍ່ຫາທາງສູນ CJC Centre ໃນເຂດຂອງທ່ານທາງໂທຣະສັບ, ສາຍສານ (Fax), ໜັງສື ຫຼືວ່າທາງວິທີການສາຍສານ e-mail. ພະນັກງານຂອງພວກເຮົາຈະຮັບຟັງຄວາມກັງວົນຕ່າງໆຂອງທ່ານ ແລະຈະໃຫ້ຄຳແນະນຳທ່ານທັນທີທັນໃດ ຖ້າວ່າພວກເຮົາສາມາດຊ່ວຍເຫຼືອທ່ານໄດ້.

ຖ້າວ່າພວກເຮົາສາມາດຊ່ວຍເຫຼືອທ່ານໄດ້, ພະນັກງານຂອງພວກເຮົາຈະຖາມເອົາລາຍລະອຽດຕ່າງໆຈາກທ່ານ, ຄວາມກັງວົນຕ່າງໆຂອງທ່ານ ແລະພວກຄົນອື່ນໆທີ່ກ່ຽວຂ້ອງ. ແລ້ວພວກເຮົາກໍຈະຕິດຕໍ່ຫາພວກຄົນອື່ນ ແລະຊຸກຍູ້ໃຫ້ພວກເຂົາມາຮ່ວມໃນການປະຊຸມໄກເກັ່ຽທຳຄວາມປະນີປະນອມກັນ.

## ການໄກ່ເກ່ຍທຳຄວາມປະນີປະນອມກັນນັ້ນຈັດຂຶ້ນເວລາໃດແລະຢູ່ບ່ອນໃດ?

ການປະຊຸມໄກ່ເກ່ຍທຳຄວາມປະນີປະນອມກັນຕ່າງໆສາມາດຖືກຈັດຂຶ້ນຕາມເວລາສະດວກສະບາຍລະຍະກາງເວັນ, ຍາມຄ່ຳຫຼືວ່າຍາມວັນເສົາວັນອາທິດ.

ການໄກ່ເກ່ຍທຳຄວາມປະນີປະນອມກັນນັ້ນແມ່ນອາດຖືກຈັດຂຶ້ນຢູ່ສູນ CJC Centres ນັ້ນເອງ ຫຼືວ່າໂດຍຜ່ານສະຖານທີ່ເໝາະສົມຕາມເຂດທ້ອງຖິ່ນຕ່າງໆ. ການປະຊຸມທາງໂທຣະສັບຕ່າງໆກໍສາມາດຈັດໃຫ້ໄດ້ເໝືອນກັນ. ທ່ານຈຳເປັນຈະຕ້ອງຕິດຕໍ່ຫາສູນໃນເຂດຂອງທ່ານ ເພື່ອເອົາລາຍລະອຽດ.

ການປະຊຸມໄກ່ເກ່ຍທຳຄວາມປະນີປະນອມກັນອັນໃດອັນນຶ່ງທຳມະດາໃຊ້ເວລາລະຫວ່າງ 2 & 4 ຊົ່ວໂມງ.

*ການບໍຣິການໄກ່ເກ່ຍທຳຄວາມປະນີປະນອມກັນຍັງບໍ່ມີຮັບໃຊ້ເທື່ອ ຢູ່ເຂດຫ່າງໄກບາງບ່ອນຂອງຣັດ NSW.

## ທ່ານຕ້ອງການນາຍພາສາບໍ?

ຖ້າວ່າທ່ານຕ້ອງການຢາກເວົາກັບພະນັກງານສຳພາດຂອງພວກເຮົາຜູ້ໃດຜູ້ນຶ່ງ, ກະຣຸນາຕິດຕໍ່ຫາຫ້ອງການບໍຣິການນາຍພາສາ Telephone Interpreter Service ຕາມນຳເບີ 131 450 ເພື່ອຂໍເອົານາຍພາສາຜູ້ໃດຜູ້ນຶ່ງ.

ຮ້ອງຂໍໃຫ້ພວກເພິ່ນຕິດຕໍ່ຫາສູນໃຫ້ຄວາມຍຸດຕິທຳຕໍ່ຊຸມຊົນ Community Justice Centre ໃນເຂດຂອງທ່ານ ແລະພວກເຮົາຈະ

Freecall:1800 990 777
Email: cjc@justice.nsw.gov.au
Website: www.cjc.nsw.gov.au

ພະຍາຍາມຊ່ວຍເຫຼືອທ່ານ.